ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 1304/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ຂໍ້ຕົກລົງ
# ວ່າດ້ວຍການຈັດຊັ້ນ ແລະ ຫັກເງິນແຮ ຄ່າເຊົ່າສິນເຊື່ອ ຂອງບໍລິສັດເຊົ່າສິນເຊື່ອ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ສະບັບເລກທີ 471/ລບ, ລົງວັນທີ 02 ກໍລະກົດ 2021;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຊັ້ນ ແລະ ການຫັກເງິນແຮ ຄ່າເຊົ່າສິນເຊື່ອ ຂອງບໍລິສັດເຊົ່າສິນເຊື່ອ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການດຳເນີນງານ ແລະ ຄວາມສ່ຽງທາງດ້ານການບໍລິຫານສິນເຊື່ອ, ເຮັດໃຫ້ການຈັດຕັ້ງປະຕິບັດຖືກຕ້ອງ ແລະ ເປັນເອກະພາບ ແນໃສ່ຮັກສາຄວາມໝັ້ນຄົງຂອງບໍລິສັດເຊົ່າສິນເຊື່ອ.

**ມາດຕາ 2 ການຈັດຊັ້ນ ແລະ ການຫັກເງິນແຮ ຄ່າເຊົ່າສິນເຊື່ອ ຂອງບໍລິສັດເຊົ່າສິນເຊື່ອ**

ການຈັດຊັ້ນ ແລະ ການຫັກເງິນແຮ ຄ່າເຊົ່າສິນເຊື່ອ ຂອງບໍລິສັດເຊົ່າສິນເຊື່ອ ແມ່ນ ການຈັດຊັ້ນໜີ້ຕ້ອງຮັບຈາກຜູ້ເຊົ່າສິນເຊື່ອ ໂດຍແບ່ງອອກເປັນຊັ້ນ ແລະ ຫັກເງິນແຮຕາມອັດຕາສ່ວນ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໜີ້ຕ້ອງຮັບທວງຍາກ** ໝາຍເຖິງ ຄ່າເຊົ່າສິນເຊື່ອທີ່ຖືກຈັດເປັນ ຊັ້ນຕໍ່າກວ່າມາດຕະຖານ, ຊັ້ນສົງໄສ ແລະ ຊັ້ນສູນ;

2. **ຄ່າເຊົ່າສິນເຊື່ອ** ໝາຍເຖິງ ຕົ້ນທຶນ ແລະ ດອກເບ້ຍ ຂອງການເຊົ່າສິນເຊື່ອ ຊຶ່ງຜູ້ເຊົ່າສິນເຊື່ອ ມີພັນທະໃນການຊຳລະໃຫ້ບໍລິສັດເຊົ່າສິນເຊື່ອ;

3. **ງວດ** ໝາຍເຖິງ ກຳນົດເວລາການຊຳລະຄ່າເຊົ່າສິນເຊື່ອ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາເຊົ່າສິນເຊື່ອ ຊຶ່ງ ໜຶ່ງງວດ ເທົ່າກັບ ໜຶ່ງເດືອນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບໍລິສັດເຊົ່າສິນເຊື່ອ ທີ່ດຳເນີນທຸລະກິດຢູ່ ສປປ ລາວ.

## ໝວດທີ 2
## ການຈັດຊັ້ນ ແລະ ການຫັກເງິນແຮ ຄ່າເຊົ່າສິນເຊື່ອ

**ມາດຕາ 5 ການຈັດຊັ້ນຄ່າເຊົ່າສິນເຊື່ອ**

ບໍລິສັດເຊົ່າສິນເຊື່ອ ຕ້ອງຈັດຊັ້ນຄ່າເຊົ່າສິນເຊື່ອເປັນ ຫ້າ ຊັ້ນ ດັ່ງນີ້:

1. ຊັ້ນປົກກະຕິ ຫຼື ເອີ້ນວ່າ ຊັ້ນ A;
2. ຊັ້ນຄວນເອົາໃຈໃສ່ ຫຼື ເອີ້ນວ່າ ຊັ້ນ B;
3. ຊັ້ນຕໍ່າກວ່າມາດຕະຖານ ຫຼື ເອີ້ນວ່າ ຊັ້ນ C;
4. ຊັ້ນສົງໄສ ຫຼື ເອີ້ນວ່າ ຊັ້ນ D;
5. ຊັ້ນສູນ ຫຼື ເອີ້ນວ່າ ຊັ້ນ E.

**ມາດຕາ 6 ຊັ້ນປົກກະຕິ**

ຊັ້ນປົກກະຕິ ແມ່ນ ຄ່າເຊົ່າສິນເຊື່ອທີ່ຜູ້ເຊົ່າສິນເຊື່ອ ໄດ້ປະຕິບັດສັນຍາເປັນປົກກະຕິ ໂດຍມີການຊຳລະຄ່າເຊົ່າສິນເຊື່ອຄົບຖ້ວນ ຫຼື ຄ້າງຊຳລະ ບໍ່ເກີນ ໜຶ່ງງວດ ນັບແຕ່ວັນຄົບກຳນົດຊຳລະ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 7 ຊັ້ນຄວນເອົາໃຈໃສ່**

ຊັ້ນຄວນເອົາໃຈໃສ່ ແມ່ນ ຄ່າເຊົ່າສິນເຊື່ອ ທີ່ມີການຄ້າງຊຳລະ ແຕ່ ໜຶ່ງງວດບວກໜຶ່ງວັນ ແຕ່ບໍ່ເກີນ ສາມງວດ ນັບແຕ່ຄົບກຳນົດເວລາຊຳລະ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 8 ຊັ້ນຕໍ່າກວ່າມາດຕະຖານ**

ຊັ້ນຕໍ່າກວ່າມາດຕະຖານ ແມ່ນ ຄ່າເຊົ່າສິນເຊື່ອທີ່ຕົກຢູ່ໃນເງື່ອນໄຂໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຄ້າງຊຳລະ ແຕ່ ສາມງວດບວກໜຶ່ງວັນ ແຕ່ບໍ່ເກີນ ສີ່ງວດ;

2. ຖືກຈັດເປັນຊັ້ນຄວນເອົາໃຈໃສ່ ແຕ່ຍັງສືບຕໍ່ຄ້າງຊຳລະ;

3. ອະນຸມັດການເຊົ່າສິນເຊື່ອ ໂດຍບໍ່ສອດຄ່ອງກັບກົດໝາຍ, ດຳລັດ, ລະບຽບການຂອງທະນາຄານແຫ່ງ ສປປ ລາວ, ລະບຽບພາຍໃນ ຫຼື ຄູ່ມືບໍລິຫານສິນເຊື່ອ ຂອງບໍລິສັດເຊົ່າສິນເຊື່ອ;

4. ມີແຫຼ່ງທຶນໃນການຊຳລະ ບໍ່ພຽງພໍ ເຮັດໃຫ້ຄວາມສາມາດໃນການຊຳລະຄ່າເຊົ່າສິນເຊື່ອຫຼຸດລົງ.

**ມາດຕາ 9 ຊັ້ນສົງໄສ**

ຊັ້ນສົງໄສ ແມ່ນ ຄ່າເຊົ່າສິນເຊື່ອທີ່ຕົກຢູ່ໃນເງື່ອນໄຂໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຄ້າງຊໍາລະຄ່າເຊົ່າສິນເຊື່ອ ແຕ່ ສີ່ງວດບວກໜຶ່ງວັນ ແຕ່ບໍ່ເກີນ ຫົກງວດ;

2. ຖືກຈັດເປັນຊັ້ນຕໍ່າກວ່າມາດຕະຖານ ແຕ່ຍັງສືບຕໍ່ຄ້າງຊໍາລະ;

3. ສັນຍາເຊົ່າສິນເຊື່ອ ບໍ່ໄດ້ຮັບການຄໍ້າປະກັນ ຈາກບຸກຄົນທີສາມ ທີ່ມີຖານະການເງິນໝັ້ນຄົງ;

4. ມີຄວາມສ່ຽງສູງທີ່ຈະສູນເສຍຄ່າເຊົ່າສິນເຊື່ອທັງໝົດ ແຕ່ມີຂໍ້ມູນທີ່ຢັ້ງຢືນໄດ້ວ່າ ຜູ້ເຊົ່າສິນເຊື່ອ ຍັງມີຄວາມສາມາດຊໍາລະຄ່າເຊົ່າສິນເຊື່ອ ເປັນຕົ້ນ ຢູ່ໃນຂັ້ນຕອນການປັບປຸງທຸລະກິດ ຫຼື ມີຊັບສິນຮອງຮັບໃນການຊໍາລະຄ້າງວດ.

**ມາດຕາ 10 ຊັ້ນສູນ**

ຊັ້ນສູນ ແມ່ນ ຄ່າເຊົ່າສິນເຊື່ອທີ່ຕົກຢູ່ໃນເງື່ອນໄຂໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຄ້າງຊໍາລະຄ່າເຊົ່າສິນເຊື່ອ ແຕ່ ຫົກງວດບວກໜຶ່ງວັນ ຂຶ້ນໄປ;

2. ຖືກຈັດເປັນຊັ້ນສົງໄສ ແຕ່ຍັງສືບຕໍ່ຄ້າງຊໍາລະ;

3. ປະເມີນແລ້ວເຫັນວ່າ ບໍ່ສາມາດເກັບຄ່າເຊົ່າສິນເຊື່ອຄືນໄດ້ ເປັນຕົ້ນ ບໍ່ສາມາດຕິດຕໍ່ຜູ້ເຊົ່າສິນເຊື່ອ, ຜູ້ເຊົ່າສິນເຊື່ອເສຍຊີວິດ, ຊັບສິນເຊົ່າຖືກລັກ;

4. ມີຄໍາສັ່ງຈາກອົງການທີ່ມີສິດອໍານາດ ໃຫ້ອາຍັດຊັບສິນເຊົ່າ ເນື່ອງຈາກມີສ່ວນພົວພັນກັບການກະທໍາຜິດທາງອາຍາ;

5. ມີຄໍາສັ່ງຈາກອົງການທີ່ມີສິດອໍານາດ ໃຫ້ຜູ້ເຊົ່າສິນເຊື່ອ ເປັນຜູ້ຖືກຫາ ແລະ ຖືກກັກຂັງພາງ ແຕ່ສາມເດືອນ ຂຶ້ນໄປ ຫຼື ຖືກລົງໂທດຕັດອິດສະລະພາບ.

**ມາດຕາ 11 ການຄິດໄລ່ດອກເບ້ຍຄ້າງຮັບ**

ບໍລິສັດເຊົ່າສິນເຊື່ອ ຕ້ອງຢຸດຄິດໄລ່ດອກເບ້ຍຄ້າງຮັບເຂົ້າເປັນລາຍຮັບ ນັບແຕ່ວັນທີ່ຄ່າເຊົ່າສິນເຊື່ອຖືກຈັດເປັນໜີ້ຕ້ອງຮັບທວງຍາກ ພ້ອມທັງເກັບຄືນລາຍຮັບດອກເບ້ຍອອກເປັນລາຍຈ່າຍ. ສໍາລັບດອກເບ້ຍທີ່ບໍລິສັດເຊົ່າສິນເຊື່ອສືບຕໍ່ຄິດໄລ່ ໃຫ້ບັນທຶກຕິດຕາມຢູ່ນອກເອກະສານລາຍງານການເງິນ.

**ມາດຕາ 12 ການຫັກເງິນແຮຄ່າເຊົ່າສິນເຊື່ອ**

ບໍລິສັດເຊົ່າສິນເຊື່ອ ຕ້ອງຫັກເງິນແຮຄ່າເຊົ່າສິນເຊື່ອ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມອັດຕາສ່ວນ ດັ່ງນີ້:

1. ຊັ້ນປົກກະຕິ ໃຫ້ຫັກສູນຈໍ້າຫ້າສ່ວນຮ້ອຍ (0.5%);

2. ຊັ້ນຄວນເອົາໃຈໃສ່ ໃຫ້ຫັກຫ້າສ່ວນຮ້ອຍ (5%);

3. ຊັ້ນຕໍ່າກວ່າມາດຕະຖານ ໃຫ້ຫັກຊາວຫ້າສ່ວນຮ້ອຍ (25%);

4. ຊັ້ນສົງໄສ ໃຫ້ຫັກຫ້າສິບສ່ວນຮ້ອຍ (50%);

5. ຊັ້ນສູນ ໃຫ້ຫັກໜຶ່ງຮ້ອຍສ່ວນຮ້ອຍ (100%).

ວິທີຄິດໄລ່ການຫັກເງິນແຮຄ່າເຊົ່າສິນເຊື່ອ ໃຫ້ເອົາຍອດເຫຼືອຄ່າເຊົ່າສິນເຊື່ອ ຄູນໃຫ້ອັດຕາສ່ວນເງິນແຮແຕ່ລະຊັ້ນຂອງຄ່າເຊົ່າສິນເຊື່ອ.

**ມາດຕາ 13 ການຈັດຊັ້ນ ແລະ ການຫັກເງິນແຮຄ່າເຊົ່າສິນເຊື່ອຕາມມາດຕະຖານສາກົນ**

ບໍລິສັດເຊົ່າສິນເຊື່ອ ທີ່ເປັນບໍລິສັດໃນກຸ່ມຂອງບໍລິສັດຕ່າງປະເທດ ຫຼື ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບຂອງ ສປປ ລາວ ສາມາດຈັດຊັ້ນ ແລະ ຫັກເງິນແຮ ຄ່າເຊົ່າສິນເຊື່ອ ຕາມມາດຕະຖານສາກົນ ຫຼື ລະບຽບການທີ່ກ່ຽວຂ້ອງ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ມີຄວາມເຂັ້ມງວດກວ່າເນື້ອໃນຂອງຂໍ້ຕົກລົງສະບັບນີ້ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ.

## ໝວດທີ 3
## ການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ

**ມາດຕາ 14 ການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ**

ການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ແມ່ນ ການປັບປຸງແກ້ໄຂສັນຍາເຊົ່າສິນເຊື່ອ ເນື່ອງຈາກຜູ້ເຊົ່າສິນເຊື່ອ ບໍ່ສາມາດຊຳລະຄ່າງວດຕາມສັນຍາ ຊຶ່ງບໍລິສັດເຊົ່າສິນເຊື່ອ ສາມາດຕົກລົງກັບຜູ້ເຊົ່າສິນເຊື່ອ ກ່ຽວກັບການປັບປຸງເນື້ອໃນຂອງສັນຍາເຊົ່າສິນເຊື່ອຄືນໃໝ່ ເປັນຕົ້ນ ແຜນການຊຳລະ, ອັດຕາດອກເບ້ຍ, ອາຍຸສັນຍາ ແລະ ເງື່ອນໄຂອື່ນ ເພື່ອສ້າງຄວາມສະດວກໃຫ້ຜູ້ເຊົ່າສິນເຊື່ອ ສາມາດສືບຕໍ່ຊຳລະຄ່າເຊົ່າສິນເຊື່ອ ຢ່າງຄົບຖ້ວນ.

**ມາດຕາ 15 ເງື່ອນໄຂການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ**

ເງື່ອນໄຂການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ມີດັ່ງນີ້:

1. ຄ່າເຊົ່າສິນເຊື່ອ ບໍ່ຖືກຈັດເປັນຊັ້ນສູນ;
2. ຜູ້ເຊົ່າສິນເຊື່ອ ຍັງມີຄວາມສາມາດໃນການສ້າງລາຍຮັບ ເພື່ອຊຳລະຄ່າເຊົ່າສິນເຊື່ອ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນສັນຍາເຊົ່າສິນເຊື່ອ;
3. ແຜນການຊຳລະຄ່າເຊົ່າສິນເຊື່ອ, ແຜນທຸລະກິດ, ການຄາດຄະເນກະແສເງິນສົດ ຂອງຜູ້ເຊົ່າສິນເຊື່ອ ມີຄວາມສອດຄ່ອງກັນ, ສົມເຫດສົມຜົນ ແລະ ສາມາດປະຕິບັດໄດ້.

ບໍລິສັດເຊົ່າສິນເຊື່ອ ສາມາດປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອໄດ້ ບໍ່ເກີນ ສອງຄັ້ງ. ໃນກໍລະນີ ຜູ້ເຊົ່າສິນເຊື່ອບໍ່ສາມາດຊຳລະຄ່າເຊົ່າສິນເຊື່ອ ຍ້ອນໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ, ໄພທຳມະຊາດ ຫຼື ສະພາບເສດຖະກິດ ສາມາດປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອໄດ້ ຕາມການຕົກລົງຂອງຄູ່ສັນຍາ ຫຼື ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 16 ເອກະສານປະກອບໃນການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ**

ເອກະສານປະກອບໃນການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ມີດັ່ງນີ້:

1. ໜັງສືສະເໜີຂໍປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ຕາມແບບພິມຂອງບໍລິສັດເຊົ່າສິນເຊື່ອ;
2. ແຜນການປັບປຸງ ແລະ ຟື້ນຟູທຸລະກິດ ທີ່ສະແດງໃຫ້ເຫັນເຖິງຄວາມສາມາດໃນການຊຳລະຄ່າເຊົ່າສິນເຊື່ອ (ສຳລັບຜູ້ເຊົ່າສິນເຊື່ອທີ່ເປັນນິຕິບຸກຄົນ);
3. ມະຕິ ຫຼື ບົດບັນທຶກກອງປະຊຸມ ຂອງສະພາບໍລິຫານ ຫຼື ເອກະສານຢັ້ງຢືນຂອງເຈົ້າຂອງວິສາຫະກິດທີ່ມີການຕົກລົງ ໃຫ້ສະເໜີປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ (ສຳລັບຜູ້ເຊົ່າສິນເຊື່ອທີ່ເປັນນິຕິບຸກຄົນ);
4. ໃບລາຍງານຖານະການເງິນ (ສຳລັບຜູ້ເຊົ່າສິນເຊື່ອທີ່ເປັນນິຕິບຸກຄົນ);
5. ເອກະສານຢັ້ງຢືນແຫຼ່ງລາຍຮັບ (ສຳລັບຜູ້ເຊົ່າສິນເຊື່ອທີ່ເປັນບຸກຄົນ);
6. ສັນຍາປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ກໍລະນີໄດ້ປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອມາແລ້ວ ໜຶ່ງຄັ້ງ.
7. ເອກະສານອື່ນ ຕາມການຮຽກຮ້ອງຂອງບໍລິສັດເຊົ່າສິນເຊື່ອ.

**ມາດຕາ 17 ການພິຈາລະນາການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ**

ບໍລິສັດເຊົ່າສິນເຊື່ອ ຕ້ອງພິຈາລະນາການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ບົນພື້ນຖານຂໍ້ມູນ ແລະ ເອກະສານ ດັ່ງນີ້:

1. ມີບົດວິເຄາະກ່ຽວກັບຖານະການເງິນ, ແຜນການປັບປຸງ ແລະ ຟື້ນຟູທຸລະກິດ, ແຜນຄາດຄະເນກະແສເງິນສົດ, ການຄາດຄະເນການໄດ້ຮັບຊໍາລະທີ່ຊີ້ໃຫ້ເຫັນເຖິງຄວາມສາມາດຂອງຜູ້ເຊົ່າສິນເຊື່ອ ໃນການຊໍາລະຄ່າເຊົ່າສິນເຊື່ອ ຕາມເງື່ອນໄຂຂອງການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ຢ່າງຈະແຈ້ງ ແລະ ຊັດເຈນ;

2. ມີການຕີມູນຄ່າຊັບສິນເຊົ່າ ທີ່ສົມເຫດສົມຜົນ ກັບການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ;

3. ມີການຄົ້ນຫາຂໍ້ມູນຂ່າວສານສິນເຊື່ອຂອງຜູ້ເຊົ່າສິນເຊື່ອ ນໍາບໍລິສັດຂໍ້ມູນຂ່າວສານສິນເຊື່ອ ແຫ່ງ ສປປ ລາວ ກ່ອນການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ໃນແຕ່ລະຄັ້ງ.

**ມາດຕາ 18 ການຈັດຊັ້ນຄ່າເຊົ່າສິນເຊື່ອທີ່ຖືກປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ**

ພາຍຫຼັງການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ, ບໍລິສັດເຊົ່າສິນເຊື່ອ ຕ້ອງຈັດຊັ້ນຄ່າເຊົ່າສິນເຊື່ອທີ່ຖືກປັບປຸງໂຄງສ້າງ ດັ່ງນີ້:

1. ຈັດເປັນຊັ້ນເກົ່າ ກ່ອນມີການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ;

2. ໃນກໍລະນີຊໍາລະຄ່າເຊົ່າສິນເຊື່ອ ຕາມສັນຍາປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ສອງງວດ ຕໍ່ເນື່ອງ, ບໍລິສັດເຊົ່າສິນເຊື່ອ ສາມາດຈັດເປັນຊັ້ນ ດັ່ງນີ້:

   - ຊັ້ນຕໍ່າກວ່າມາດຕະຖານ ຈັດເປັນຊັ້ນຄວນເອົາໃຈໃສ່;
   - ຊັ້ນສົງໄສ ຈັດເປັນຊັ້ນຕໍ່າກວ່າມາດຕະຖານ. ຖ້າຜູ້ເຊົ່າສິນເຊື່ອ ສາມາດສືບຕໍ່ຊໍາລະຄ່າເຊົ່າສິນເຊື່ອ ຕິດຕໍ່ກັນຕື່ມອີກ ສອງງວດ ຕໍ່ເນື່ອງ ແມ່ນສາມາດຈັດເປັນຊັ້ນປົກກະຕິ.

3. ໃນກໍລະນີທີ່ບໍ່ສາມາດຊໍາລະຄ່າເຊົ່າສິນເຊື່ອ ຕາມເງື່ອນໄຂຂອງສັນຍາປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ການຈັດຊັ້ນຄ່າເຊົ່າສິນເຊື່ອໃຫ້ນັບລວມໄລຍະເວລາຄ້າງຊໍາລະ ກັບໄລຍະເວລາຄ້າງຊໍາລະກ່ອນການປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ໂດຍໃຫ້ນັບຮອດວັນອະນຸມັດປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ແລ້ວຈັດຊັ້ນ ແລະ ຫັກເງິນແຮຄ່າເຊົ່າສິນເຊື່ອດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 19 ການຈັດຊັ້ນຄ່າເຊົ່າສິນເຊື່ອ ທີ່ບໍ່ຖືກປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ**

ພາຍຫຼັງເກັບຄືນຄ່າເຊົ່າສິນເຊື່ອ ບໍລິສັດເຊົ່າສິນເຊື່ອ ຕ້ອງຈັດຊັ້ນຄ່າເຊົ່າສິນເຊື່ອ ທີ່ບໍ່ຖືກປັບປຸງໂຄງສ້າງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຈັດເປັນຊັ້ນເກົ່າ ຖ້າສາມາດເກັບຄືນຄ່າເຊົ່າສິນເຊື່ອ ໄດ້ບາງສ່ວນ;

2. ຈັດເປັນຊັ້ນປົກກະຕິ ຖ້າສາມາດເກັບຄືນຄ່າເຊົ່າສິນເຊື່ອ ໄດ້ທັງໝົດ ແຕ່ຍັງບໍ່ທັນໝົດງວດຊໍາລະ;

3. ຈັດເປັນຊັ້ນປົກກະຕິ ຖ້າສາມາດເກັບຄ່າເຊົ່າສິນເຊື່ອ ໄດ້ທັງໝົດ ແລະ ຜູ້ເຊົ່າສິນເຊື່ອ ໄດ້ປິດການຊໍາລະ.

**ມາດຕາ 20 ການລ້າງ ແລະ ເກັບຄືນ ຄ່າເຊົ່າສິນເຊື່ອທີ່ຖືກຈັດເປັນຊັ້ນສູນ**

ບໍລິສັດເຊົ່າສິນເຊື່ອ ປະຕິບັດການ ລ້າງ ແລະ ເກັບຄືນ ຄ່າເຊົ່າສິນເຊື່ອທີ່ຖືກຈັດຊັ້ນເປັນສູນ ດັ່ງນີ້:

1. ໄດ້ຮັບການເຫັນດີ ແລະ ຮັບຮອງໂດຍສະພາບໍລິຫານຂອງບໍລິສັດເຊົ່າສິນເຊື່ອ;

2. ມີລະບຽບ ຫຼື ຄູ່ມື ກ່ຽວກັບການເກັບຄືນຄ່າເຊົ່າສິນເຊື່ອທີ່ຖືກລ້າງ ເພື່ອໄປຕິດຕາມຢູ່ນອກເອກະສານລາຍງານການເງິນ;

3. ລ້າງຄ່າເຊົ່າສິນເຊື່ອ ເພື່ອໄປຕິດຕາມຢູ່ນອກເອກະສານລາຍງານການເງິນ ພາຍໃນໄຕມາດຖັດໄປ ພ້ອມທັງໃຫ້ສືບຕໍ່ເກັບຄືນຄ່າເຊົ່າສິນເຊື່ອດັ່ງກ່າວ ເຂົ້າເປັນລາຍຮັບ.

## ໝວດທີ 4
## ການບັນທຶກບັນຊີ ແລະ ການລາຍງານ

**ມາດຕາ 21 ການບັນທຶກບັນຊີ**

ການບັນທຶກບັນຊີ ກ່ຽວກັບການຈັດຊັ້ນ ແລະ ການຫັກເງິນແຮ ຄ່າເຊົ່າສິນເຊື່ອ ໃຫ້ປະຕິບັດຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 22 ການລາຍງານ**

ບໍລິສັດເຊົ່າສິນເຊື່ອ ຕ້ອງລາຍງານ ການຈັດຊັ້ນ, ການຫັກເງິນແຮ ແລະ ການປັບປຸງໂຄງສ້າງ ຄ່າເຊົ່າສິນເຊື່ອ ໃຫ້ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ແລະ ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຕາມແບບພິມລາຍງານທີ່ ທະນາຄານແຫ່ງ ສປປ ລາວ ແລະ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ວາງອອກ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ການລະເມີດ

**ມາດຕາ 23 ຂໍ້ຫ້າມ**

ຫ້າມບໍລິສັດເຊົ່າສິນເຊື່ອ ມີພຶດຕິກຳ ດັ່ງນີ້:

1. ບັນທຶກດອກເບ້ຍຄ້າງຮັບ ເຂົ້າເປັນລາຍຮັບ ນັບແຕ່ວັນທີ່ຄ່າເຊົ່າສິນເຊື່ອດັ່ງກ່າວ ຖືກຈັດເປັນໜີ້ຕ້ອງຮັບທວງຍາກ;

2. ນຳເອົາຄ່າເຊົ່າສິນເຊື່ອທີ່ຖືກຈັດເປັນຊັ້ນສູນ ມາປັບປຸງໂຄງສ້າງ;

3. ປັບປຸງໂຄງສ້າງຄ່າເຊົ່າສິນເຊື່ອ ໂດຍບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອຫຼີກລ້ຽງການຈັດເປັນໜີ້ຕ້ອງຮັບທວງຍາກ ແລະ ຫັກເງິນແຮຄ່າເຊົ່າສິນເຊື່ອ;

4. ສະໜອງຄ່າເຊົ່າສິນເຊື່ອບ້ວງໃໝ່ໃຫ້ຜູ້ເຊົ່າສິນເຊື່ອ ທີ່ຖືກຈັດເປັນໜີ້ຕ້ອງຮັບທວງຍາກ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 24 ມາດຕະການຕໍ່ການລະເມີດ**

ບໍລິສັດເຊົ່າສິນເຊື່ອ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງວ່າດ້ວຍມາດຕະການຕໍ່ຜູ້ລະເມີດ ຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 845/ທຫລ, ລົງວັນທີ 20 ກັນຍາ 2018.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ເປັນເຈົ້າການໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບໍລິສັດເຊົ່າສິນເຊື່ອ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

**ວັດທະນາ ດາລາລອຍ**